**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 0848 /ອຄ

ນະຄອນຫຼວງວຽງຈັນ, ວັນທີ 13 ກັນຍາ 2021

# ຂໍ້ຕົກລົງ
# ວ່າດ້ວຍ ລາຍການສິນຄ້າເກືອດຫ້າມການນຳເຂົ້າ ຫຼື ສົ່ງອອກ

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017;
- ອີງຕາມ ດຳລັດ ວ່າດ້ວຍການນຳເຂົ້າ ແລະ ການສົ່ງອອກສິນຄ້າ ເລກທີ 114/ລບ, ລົງວັນທີ 06 ເມສາ 2011;
- ອີງຕາມ ໜັງສືສະເໜີຂອງ ກົມການນຳເຂົ້າ ແລະ ສົ່ງອອກ ເລກທີ 3015/ກຂອ, ລົງວັນທີ 08 ກັນຍາ 2021.

## ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອຜັນຂະຫຍາຍ ມາດຕາ 11 ຂອງ ດຳລັດວ່າດ້ວຍການນຳເຂົ້າ ແລະ ການສົ່ງອອກສິນຄ້າ ເລກທີ 114/ລບ, ລົງວັນທີ 06 ເມສາ 2011.

### ມາດຕາ 2 ລາຍການສິນຄ້າເກືອດຫ້າມການນຳເຂົ້າ ຫຼື ສົ່ງອອກ

ລາຍການສິນຄ້າເກືອດຫ້າມການນຳເຂົ້າ ຫຼື ສົ່ງອອກ ແມ່ນປະເພດສິນຄ້າທີ່ຫ້າມນຳເຂົ້າ ຫຼື ສົ່ງອອກ ເພື່ອປົກປ້ອງ ຄວາມໝັ້ນຄົງຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ສິນລະທຳ, ວັດທະນະທຳ, ຊີວິດ ຫຼື ສຸຂະພາບຂອງ ຄົນ, ສັດ ຫຼື ພືດ, ເພື່ອປົກປັກຮັກສາມໍຣະດົກແຫ່ງຊາດ, ຊັບພະຍາກອນທຳມະຊາດ ຫຼື ເພື່ອປະຕິບັດຕາມສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

### ມາດຕາ 3 ຕາຕະລາງລາຍການສິນຄ້າເກືອດຫ້າມການນຳເຂົ້າ ຫຼື ສົ່ງອອກ

ຕາຕະລາງລາຍການສິນຄ້າເກືອດຫ້າມການນຳເຂົ້າ ຫຼື ສົ່ງອອກ ແມ່ນອີງຕາມລະຫັດສາລະບານອັດຕາພາສີ ຊຶ່ງໄດ້ຈັດແບ່ງເປັນ ສອງຕາຕະລາງ ຄື: ຕາຕະລາງລາຍການສິນຄ້າເກືອດຫ້າມການນຳເຂົ້າ ແລະ ຕາຕະລາງລາຍການສິນຄ້າເກືອດຫ້າມການສົ່ງອອກ ໂດຍມີລາຍລະອຽດ ດັ່ງນີ້:

1. ຕາຕະລາງລາຍການສິນຄ້າເກືອດຫ້າມການນຳເຂົ້າ

| ລ/ດ | ລະຫັດພາສີ | ລາຍການສິນຄ້າ | ເຫດຜົນການຄຸ້ມຄອງ | ນິຕິກຳອ້າງອີງ | ຂະແໜງການຄຸ້ມຄອງ |
|---|---|---|---|---|---|
| 01 | – | ເຄມີອັນຕະລາຍປະເພດໜຶ່ງ ທີ່ນອນໃນບັນຊີເຄມີອຸດສາຫະກຳ ຂອງກະຊວງອຸດສາຫະກຳ ແລະ ການຄ້າ | ເພື່ອປົກປ້ອງສຸຂະພາບ, ຄວາມປອດໄພຂອງຄົນ ແລະ ສິ່ງແວດລ້ອມ | – ສົນທິສັນຍາວ່າດ້ວຍການເກືອດຫ້າມອາວຸດເຄມີ (Chemical Weapons Convention);<br>– ສົນທິສັນຍາຣອດເຕີດຳ (Rotterdam Convention);<br>– ສົນທິສັນຍາສຕອກໂຮມ (Stockholm Convention);<br>– ອະນຸສັນຍາມົງເຣອານ (Montreal Protocol);<br>– ກົດໝາຍວ່າດ້ວຍການຄຸ້ມຄອງເຄມີ ເລກທີ 07/ສພຊ, ລົງວັນທີ 10 ພະຈິກ 2016;<br>– ຂໍ້ຕົກລົງວ່າດ້ວຍບັນຊີເຄມີອຸດສາຫະກຳ ເລກທີ 0220/ອຄ.ກອຫ, ລົງວັນທີ 23 ມີນາ 2021. | ກົມອຸດສາຫະກຳ ແລະ ຫັດຖະກຳ (ກະຊວງອຸດສາຫະກຳ ແລະ ການຄ້າ) |
| 02 | 3601.00<br>3602.00<br>3603.00 | – ລູກປືນ-ລູກກະສູນ ແລະ ຊິ້ນສ່ວນປະກອບ<br>– ອາວຸດເສິກ<br>– ພາຫະນະຮັບໃຊ້ສົງຄາມ<br>– ປຸ່ຍລະເບີດ ແລະ ອຸປະກອນກໍ່ແຕກ<br>– ດອກໄມ້ໄຟ | ເພື່ອປົກປັກຮັກສາຄວາມສະຫງົບ ແລະ ຄວາມໝັ້ນຄົງຂອງຊາດ | – ປະມວນກົດໝາຍອາຍາ ເລກທີ 26/ສພຊ, ລົງວັນທີ 17 ພຶດສະພາ 2017;<br>– ຂໍ້ຕົກລົງວ່າດ້ວຍລະບຽບການຄຸ້ມຄອງ ແລະ ນຳໃຊ້ທາດລະເບີດຢູ່ ສປປ ລາວ ເລກທີ 39/ນຍ, ລົງວັນທີ 12 ກໍລະກົດ 2001. | ກົມອຸດສາຫະກຳປ້ອງກັນຊາດ, ກົມໃຫຍ່ເຕັກນິກກອງທັບ, (ກະຊວງປ້ອງກັນປະເທດ) |
| 03 | 1207.91.00.00<br>1211.40.00.00<br>1211.90.11.00<br>1211.90.12.00<br>1301.90.30.00<br>2939.11<br>2939.71.00.00 | ຢາເສບຕິດເກືອດຫ້າມ ແລະ ອະນຸພັນຂອງຢາເສບຕິດ | ເພື່ອປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ປົກປ້ອງຊີວິດ, ສຸຂະພາບຂອງຄົນ | – ປະມວນກົດໝາຍອາຍາ ເລກທີ 26/ສພຊ, ລົງວັນທີ 17 ພຶດສະພາ 2017;<br>– ກົດໝາຍວ່າດ້ວຍຢາເສບຕິດ ເລກທີ 10/ສພຊ, ລົງວັນທີ 25 ທັນວາ 2007;<br>– ດຳລັດຈັດຕັ້ງປະຕິບັດກົດໝາຍວ່າດ້ວຍຢາເສບຕິດ ເລກທີ 076/ນຍ, ລົງວັນທີ 20 ກຸມພາ 2009. | ຫ້ອງການກວດກາ ແລະ ຄວບຄຸມຢາເສບຕິດ, ກົມໃຫຍ່ຕຳຫຼວດ (ກະຊວງປ້ອງກັນຄວາມສະຫງົບ) |
| 04 | – | ປຶ້ມ, ສິ່ງພິມອື່ນທີ່ລາມົກອານາຈານ ແລະ ປຶ້ມອື່ນໆ ທີ່ແຕະຕ້ອງເຖິງຄວາມໝັ້ນຄົງ ຄວາມສະຫງົບຂອງຊາດ ແລະ ຂອງສັງຄົມ | ເພື່ອປົກປ້ອງວັດທະນະທຳອັນດີງາມຂອງຊາດ | ກົດໝາຍວ່າດ້ວຍການພິມຈຳໜ່າຍ ເລກທີ 05/ສພຊ, ລົງວັນທີ 09 ທັນວາ 2008. | ກົມວັນນະຄະດີ ແລະ ພິມຈຳໜ່າຍ (ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ) |

| ລ/ດ | ລະຫັດພາສີ | ລາຍການສິນຄ້າ | ເຫດຜົນການຄຸ້ມຄອງ | ນິຕິກຳອ້າງອີງ | ຂະແໜງການຄຸ້ມຄອງ |
|---|---|---|---|---|---|
| 05 | – | – ເຄື່ອງຈັກພິມເງິນ<br>– ເຄື່ອງຈັກຫຼອມເງິນຫຼຽນ<br>– ແທ່ນພິມທະນະບັດ<br>– ເຈ້ຍພິມເງິນ<br>– ນ້ຳມຶກສຳລັບພິມເງິນ<br>– ເບົ້າຫຼໍ່ຫຼຽນເງິນ | ເພື່ອປ້ອງກັນການປອມແປງ ຫຼື ຮຽນແບບທະນະບັດ ແລະ ເພື່ອຄວາມໝັ້ນຄົງທາງດ້ານເສດຖະກິດ ແລະ ຮັກສາສະຖຽນລະພາບຂອງເງິນຕາ | ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບປັບປຸງ ເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018. | ກົມນະໂຍບາຍເງິນຕາ (ທະນາຄານແຫ່ງ ສປປ ລາວ) |
| 06 | – | – ສິ່ງເສດເຫຼືອທາງອີເລັກໂຕຣນິກ (e-Waste)<br>– ໝໍ້ໄຟເກົ່າ | ເພື່ອປົກປ້ອງສຸຂະພາບ, ຄວາມປອດໄພຂອງຄົນ ແລະ ສິ່ງແວດລ້ອມ | – ສົນທິສັນຍາບາສເຊວ (Basel Convention);<br>– ແຈ້ງການກ່ຽວກັບຜົນການລົງຕິດຕາມກວດກາ ແລະ ເກັບກຳຂໍ້ມູນໂຮງງານແຍກ ແລະ ຫຼອມສິ່ງເສດເຫຼືອອີເລັກໂຕຣນິກ ແລະ ໝໍ້ໄຟເກົ່າ ໃນທົ່ວປະເທດ ເລກທີ 1855/ຫສນຍ.ກລຂ, ລົງວັນທີ 17 ພະຈິກ 2017. | ກົມອຸດສາຫະກຳ ແລະ ຫັດຖະກຳ (ກະຊວງອຸດສາຫະກຳ ແລະ ການຄ້າ) |
| 07 | – | ທຸກຊະນິດສັດນ້ຳ-ສັດປ່າ ແລະ ຊິ້ນສ່ວນຂອງມັນ ຕາມບັນຊີຫວງຫ້າມ ຂອງສົນທິສັນຍາ CITES | ເພື່ອປົກປ້ອງທຸກຊະນິດພັນທີ່ຖືກໄພຂົ່ມຂູ່ ແລະ ສ່ຽງຕໍ່ການສູນພັນ | – ສົນທິສັນຍາວ່າດ້ວຍການຄ້າຂາຍຊະນິດພັນສັດປ່າ ແລະ ພືດປ່າທີ່ໃກ້ຈະສູນພັນລະຫວ່າງປະເທດ (CITES);<br>– ກົດໝາຍວ່າດ້ວຍສັດນ້ຳ-ສັດປ່າ ເລກທີ 07/ສພຊ, ລົງວັນທີ 24 ທັນວາ 2008;<br>– ຂໍ້ຕົກລົງວ່າດ້ວຍການຮັບຮອງເອົາບັນຊີ ສັດນ້ຳ ແລະ ສັດປ່າ ປະເພດຫວງຫ້າມ ຫຼື ບັນຊີ I ແລະ ປະເພດຄຸ້ມຄອງ ຫຼື ບັນຊີ II ເລກທີ 08/ນຍ, ລົງວັນທີ 25 ກຸມພາ 2021;<br>– ຄຳສັ່ງວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາ ແລະ ສັດປ່າ ແລະ ພືດປ່າປະເພດຫວງຫ້າມ ເລກທີ 05/ນຍ, ລົງວັນທີ 08 ພຶດສະພາ 2018;<br>– ຂໍ້ຕົກລົງວ່າດ້ວຍການສ້າງ ແລະ ຄຸ້ມຄອງສວນສັດ, ຟາມ ສັດປ່າ, ສູນຟື້ນຟູ ແລະ ຂະຫຍາຍພັນສັດປ່າ ແລະ ສວນພືດປ່າ ເລກທີ 0188/ກປ, ລົງວັນທີ 03 ກຸມພາ 2019. | ກົມປ່າໄມ້ (ກະຊວງກະສິກຳ ແລະ ປ່າໄມ້) |

| ລ/ດ | ລະຫັດພາສີ | ລາຍການສິນຄ້າ | ເຫດຜົນການຄຸ້ມຄອງ | ນິຕິກຳອ້າງອີງ | ຂະແໜງການຄຸ້ມຄອງ |
|---|---|---|---|---|---|
| 08 | – | ເຄື່ອງປ່າຂອງດົງ ຕາມບັນຊີຫວງຫ້າມ ຂອງສົນທິສັນຍາ CITES | ເພື່ອປົກປ້ອງທຸກຊະນິດພັນທີ່ຖືກໄພຂົ່ມຂູ່ ແລະ ສ່ຽງຕໍ່ການສູນພັນ | – ສົນທິສັນຍາວ່າດ້ວຍການຄ້າຂາຍຊະນິດພັນສັດປ່າ ແລະ ພືດປ່າທີ່ໃກ້ຈະສູນພັນລະຫວ່າງປະເທດ (CITES);<br>– ຄຳສັ່ງວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາ ສັດປ່າ ແລະ ພືດປ່າປະເພດຫວງຫ້າມ ເລກທີ 05/ນຍ, ລົງວັນທີ 08 ພຶດສະພາ 2018;<br>– ຂໍ້ຕົກລົງວ່າດ້ວຍການສ້າງ ແລະ ຄຸ້ມຄອງສວນສັດ, ຟາມ ສັດປ່າ, ສູນຟື້ນຟູ ແລະ ຂະຫຍາຍພັນສັດປ່າ ແລະ ສວນພືດປ່າ ເລກທີ 0188/ກປ, ລົງວັນທີ 3 ກຸມພາ 2019;<br>– ຂໍ້ຕົກລົງວ່າດ້ວຍການກຳນົດບັນຊີໄມ້ I, II ແລະ III ເລກທີ 0448/ກປ, ລົງວັນທີ 6 ເມສາ 2021;<br>– ຂໍ້ຕົກລົງວ່າດ້ວຍການກຳນົດບັນຊີເຄື່ອງປ່າຂອງດົງ I, II ແລະ III ເລກທີ 0279/ກປ, ລົງວັນທີ 19 ກຸມພາ 2020. | ກົມປ່າໄມ້ (ກະຊວງກະສິກຳ ແລະ ປ່າໄມ້) |
| 09 | 2612 | ແຮ່ທາດກຳມັນຕະພາບລັງສີທຸກຊະນິດ | ເພື່ອປົກປັກຮັກສາຄວາມສະຫງົບ ແລະ ຄວາມໝັ້ນຄົງຂອງຊາດ | – ກົດໝາຍວ່າດ້ວຍແຮ່ທາດ ສະບັບປັບປຸງ ເລກທີ 31/ສພຊ, ລົງວັນທີ 31 ທັນວາ 2017;<br>– ດຳລັດວ່າດ້ວຍການສົ່ງອອກຜະລິດຕະພັນແຮ່ທາດ ເລກທີ 90/ນຍ, ລົງວັນທີ 09 ມິຖຸນາ 2008.<br>– ຂໍ້ຕົກລົງວ່າດ້ວຍລະບຽບການຂໍອະນຸຍາດນຳເຂົ້າ ແລະ ສົ່ງອອກແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ເລກທີ 0352/ພບ, ລົງວັນທີ 13 ມີນາ 2012;<br>– ຂໍ້ຕົກລົງວ່າດ້ວຍການຊື້-ຂາຍ ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ເລກທີ 0484/ພບ, ລົງວັນທີ 20 ເມສາ 2012. | ກົມຄຸ້ມຄອງບໍ່ແຮ່ (ກະຊວງພະລັງງານ ແລະ ບໍ່ແຮ່) |

| ລ/ດ | ລະຫັດພາສີ | ລາຍການສິນຄ້າ | ເຫດຜົນການຄຸ້ມຄອງ | ນິຕິກຳອ້າງອີງ | ຂະແໜງການຄຸ້ມຄອງ |
|---|---|---|---|---|---|
| 10 | – | ຢາປາບສັດຕູພືດປະເພດອັນຕະລາຍຮ້າຍແຮງ ແລະ ຮ້າຍແຮງສູງ | ເພື່ອປົກປ້ອງສຸຂະພາບ, ຄວາມປອດໄພຂອງຄົນ ແລະ ສິ່ງແວດລ້ອມ ແລະ ເພື່ອສອດຄ່ອງກັບລະບຽບການຂອງສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ. | – ສົນທິສັນຍາຣອດເຕີດຳ (Rotterdam Convention);<br>– ສົນທິສັນຍາສຕອກໂຮມ (Stockholm Convention);<br>– ກົດໝາຍວ່າດ້ວຍການຄຸ້ມຄອງເຄມີ ເລກທີ 07/ສພຊ, ລົງວັນທີ 10 ພະຈິກ 2016;<br>– ດຳລັດວ່າດ້ວຍການຄຸ້ມຄອງຢາປາບສັດຕູພືດໃນ ສປປ ລາວ ເລກທີ 258/ລບ, ລົງວັນທີ 24 ສິງຫາ 2017;<br>– ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງຢາປາບສັດຕູພືດໃນ ສປປ ລາວ ເລກທີ 2860/ກປ, ລົງວັນທີ 11 ມິຖຸນາ 2010. | ກົມປູກຝັງ (ກະຊວງກະສິກຳ ແລະ ປ່າໄມ້) |
| 11 | – | – ອຸປະກອນຕັດຄື້ນສັນຍານຄວາມຖີ່ (Radio Frequency Jammer)<br>– ອຸປະກອນຊິມບອກສ (Simbox Equipment)<br>– ໂທລະສັບດັກຟັງ (ສຽງ, ຂໍ້ມູນ)(Spy Phone (Voice, Data)) | ເພື່ອປົກປັກຮັກສາຄວາມສະຫງົບ ແລະ ຄວາມໝັ້ນຄົງຂອງຊາດ | – ກົດໝາຍວ່າດ້ວຍໂທລະຄົມມະນາຄົມ ເລກທີ 09/ສພຊ, ລົງວັນທີ 21 ທັນວາ 2011;<br>– ກົດໝາຍວ່າດ້ວຍເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ເລກທີ 02/ສພຊ, ລົງວັນທີ 7 ພະຈິກ 2016;<br>– ກົດໝາຍວ່າດ້ວຍຄື້ນຄວາມຖີ່ວິທະຍຸສື່ສານ ເລກທີ17/ສພຊ, ລົງວັນທີ 05 ພຶດສະພາ 2017;<br>– ຂໍ້ຕົກລົງວ່າດ້ວຍການນຳເຂົ້າແລະຈຳໜ່າຍອຸປະກອນໄອຊີທີ ເລກທີ 3201/ປທສ, ລົງວັນທີ 16 ພະຈິກ 2016;<br>– ບັນຊີລາຍການອຸປະກອນໄອຊີທີ ເລກທີ 1504/ທກຊ, ລົງວັນທີ 20 ມິຖຸນາ 2018. | ກະຊວງເຕັກໂນໂລຊີ ແລະ ການສື່ສານ |
| 12 | – | ຜະລິດຕະພັນຢາສູບໄຟຟ້າ ແລະ ຢາສູບຊີຊາ | ເພື່ອປົກປ້ອງສຸຂະພາບຂອງຄົນ ແລະ ປ້ອງກັນການມົ້ວສຸມສິ່ງເສບຕິດ | ແຈ້ງການກ່ຽວກັບການສະເໜີຫ້າມການນຳເຂົ້າ, ຈຳໜ່າຍ ແລະ ບໍລິໂພກຢາສູບໄຟຟ້າ ແລະ ຢາສູບຊີຊາ ໃນ ສປປ ລາວ ເລກທີ 1297/ຫສນຍ.ກຄສ, ລົງວັນທີ 13 ສິງຫາ 2018. | ກົມອະນາໄມ ແລະ ສົ່ງເສີມສຸຂະພາບ (ກະຊວງສາທາລະນະສຸກ) |

໗

## 2. ຕາຕະລາງລາຍການສິນຄ້າເກືອດຫ້າມການສົ່ງອອກ

| ລ/ດ | ລະຫັດພາສີ | ລາຍການສິນຄ້າ | ເຫດຜົນການຄຸ້ມຄອງ | ນິຕິກຳອ້າງອີງ | ຂະແໜງການຄຸ້ມຄອງ |
|---|---|---|---|---|---|
| 01 | 9706.00.00 | ຊິ້ນສ່ວນ ຫຼື ວັດຖຸທີ່ເປັນມໍຣະດົກແຫ່ງຊາດ | ເພື່ອປົກປັກຮັກສາຊັບສົມບັດ, ມໍຣະດົກແຫ່ງຊາດທາງດ້ານສິນລະປະ, ປະຫວັດສາດ ແລະ ວັດຖຸບູຮານທີ່ເກົ່າແກ່ ອັນມີຄຸນຄ່າ ແລະ ຊຸກຍູ້ການທ່ອງທ່ຽວແບບອານຸລັກ ແລະ ຍືນຍົງ | – ກົດໝາຍວ່າດ້ວຍມໍຣະດົກແຫ່ງຊາດ ເລກທີ 44/ສພຊ, ລົງວັນທີ 24 ທັນວາ 2013;<br>– ລັດຖະບັນຍັດວ່າດ້ວຍການອະນຸລັກມໍລະດົກແຫ່ງຊາດທາງດ້ານວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ເລກທີ 03/ສປປ, ລົງວັນທີ 20 ມິຖຸນາ 1997;<br>– ຂໍ້ຕົກລົງວ່າດ້ວຍການອະນຸລັກມໍລະດົກແຫ່ງຊາດທາງດ້ານສິລາສະຖານບູຮານ, ພະທາດ, ຫໍໂຮງ, ຫໍມູນເຊື້ອ, ຫໍວາງສະແດງ, ຫໍພິພິທະພັນທຸກປະເພດ, ຕຶກອາຄານ ເກົ່າ ແລະ ໃໝ່ ເລກທີ 95/ຖວທ, ລົງວັນທີ 28 ກຸມພາ 2005. | ກົມມໍລະດົກ (ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ) |
| 02 | – | ຂີ້ເຈຍ | ເພື່ອປົກປ້ອງ ແລະ ຮັກສາຄວາມຍືນຍົງຂອງຊັບພະຍາກອນທຳມະຊາດ | – ກົດໝາຍວ່າດ້ວຍກະສິກຳ ເລກທີ 01/98/ສພຊ, ລົງວັນທີ 10 ຕຸລາ 1998;<br>– ຄຳສັ່ງວ່າດ້ວຍຄຸ້ມຄອງ ແລະ ນຳໃຊ້ຂີ້ເຈຍຢູ່ພາຍໃນປະເທດ ເລກທີ 0613/ກປ.05, ລົງວັນທີ 08 ກໍລະກົດ 2005. | ກົມປູກຝັງ (ກະຊວງກະສິກຳ ແລະ ປ່າໄມ້) |
| 03 | – | ໄມ້ທ່ອນ, ໄມ້ຕີຕັບ, ໄມ້ເລື່ອຍ, ຮາກໄມ້ ຫຼື ເຫງົ້າໄມ້, ຕໍໄມ້, ປຸດໄມ້, ງ່າໄມ້ ແລະ ໄມ້ຢືນຕົ້ນ ຫຼື ໄມ້ປະດັບ ທີ່ຂຸດຄົ້ນຈາກປ່າທຳມະຊາດ ລວມທັງຖ່ານດຳທີ່ນຳໃຊ້ວັດຖຸດິບຈາກປ່າທຳມະຊາດ | ເພື່ອປົກປັກຮັກສາຊັບພະຍາກອນປ່າໄມ້ໃຫ້ຍືນຍົງ | –ສົນທິສັນຍາວ່າດ້ວຍການຄ້າຂາຍຊະນິດພັນສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນລະຫວ່າງປະເທດ (CITES);<br>–ກົດໝາຍວ່າດ້ວຍປ່າໄມ້ ສະບັບປັບປຸງ ເລກທີ 64/ສພຊ, ລົງວັນທີ 16 ມິຖຸນາ 2019. | ກົມການນຳເຂົ້າ ແລະ ສົ່ງອອກ (ກະຊວງອຸດສາຫະກຳ ແລະ ການຄ້າ) |
| 04 | – | ເຄມີອັນຕະລາຍປະເພດໜຶ່ງທີ່ນອນໃນບັນຊີເຄມີອຸດສາຫະກຳ ຂອງກະຊວງອຸດສາຫະກຳ ແລະ ການຄ້າ | ເພື່ອປົກປ້ອງສຸຂະພາບ, ຄວາມປອດໄພຂອງຄົນ ແລະ ສິ່ງແວດລ້ອມ | – ສົນທິສັນຍາວ່າດ້ວຍອາວຸດເຄມີ (Chemical Weapons Convention);<br>– ສົນທິສັນຍາຣອດເຕີດຳ (Rotterdam Convention);<br>– ສົນທິສັນຍາສຕອກໂຮມ (Stockholm Convention); | ກົມອຸດສາຫະກຳ ແລະ ຫັດຖະກຳ (ກະຊວງອຸດສາຫະກຳ ແລະ ການຄ້າ) |

| ລ/ດ | ລະຫັດພາສີ | ລາຍການສິນຄ້າ | ເຫດຜົນການຄຸ້ມຄອງ | ນິຕິກຳອ້າງອີງ | ຂະແໜງການຄຸ້ມຄອງ |
|---|---|---|---|---|---|
| | | | | – ອະນຸສັນຍາມົງເຣອານ (Montreal Protocol);<br>– ກົດໝາຍວ່າດ້ວຍການຄຸ້ມຄອງເຄມີ ເລກທີ 07/ສພຊ, ລົງວັນທີ 10 ພະຈິກ 2016;<br>– ຂໍ້ຕົກລົງວ່າດ້ວຍບັນຊີເຄມີອຸດສາຫະກຳ ເລກທີ 0220/ອຄ.ກອຫ, ລົງວັນທີ 23 ມີນາ 2021. | |
| 05 | – | ທຸກຊະນິດສັດນ້ຳ-ສັດປ່າ ແລະ ຊິ້ນສ່ວນຂອງມັນ ຕາມບັນຊີຫວງຫ້າມ ຂອງສົນທິສັນຍາ CITES | ເພື່ອປົກປ້ອງທຸກຊະນິດພັນທີ່ຖືກໄພຂົ່ມຂູ່ ແລະ ສ່ຽງຕໍ່ການສູນພັນ | – ສົນທິສັນຍາວ່າດ້ວຍການຄ້າຂາຍຊະນິດພັນສັດປ່າ ແລະ ພືດປ່າທີ່ໃກ້ຈະສູນພັນລະຫວ່າງປະ ເທດ (CITES);<br>– ກົດໝາຍວ່າດ້ວຍສັດນ້ຳ-ສັດປ່າ ເລກທີ 07/ສພຊ, ລົງວັນທີ 24 ທັນວາ 2008;<br>– ຂໍ້ຕົກລົງວ່າດ້ວຍການຮັບຮອງເອົາບັນຊີ ສັດນ້ຳ ແລະ ສັດປ່າປະເພດຫວງຫ້າມ ຫຼື ບັນຊີ I ແລະ ປະເພດຄຸ້ມຄອງ ຫຼື ບັນຊີ II ເລກທີ 08/ນຍ, ລົງວັນທີ 25 ກຸມພາ 2021;<br>– ຄຳສັ່ງວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາ ສັດປ່າ ແລະ ພືດປ່າປະເພດຫວງຫ້າມ ເລກທີ 05/ນຍ, ລົງວັນທີ 08 ພຶດສະພາ 2018.<br>– ຂໍ້ຕົກລົງວ່າດ້ວຍການສ້າງ ແລະ ຄຸ້ມຄອງສວນສັດ, ຟາມສັດປ່າ, ສູນຟື້ນຟູ ແລະ ຂະຫຍາຍພັນສັດປ່າ ແລະ ສວນພືດປ່າ ເລກທີ 0188/ກປ, ລົງວັນທີ 3 ກຸມພາ 2019. | ກົມປ່າໄມ້ (ກະຊວງກະສິກຳ ແລະ ປ່າໄມ້) |
| 06 | – | ເຄື່ອງປ່າຂອງດົງຕາມບັນຊີຫວງຫ້າມຂອງສົນທິສັນຍາ CITES | ເພື່ອປົກປ້ອງທຸກຊະນິດພັນທີ່ຖືກໄພຂົ່ມຂູ່ ແລະ ສ່ຽງຕໍ່ການສູນພັນ | – ສົນທິສັນຍາວ່າດ້ວຍການຄ້າຂາຍຊະນິດພັນສັດປ່າ ແລະ ພືດປ່າທີ່ໃກ້ຈະສູນພັນລະຫວ່າງປະເທດ (CITES);<br>– ຄຳສັ່ງວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາ ສັດປ່າ ແລະ ພືດປ່າປະເພດຫວງຫ້າມ | ກົມປ່າໄມ້ (ກະຊວງກະສິກຳ ແລະ ປ່າໄມ້) |

| ລ/ດ | ລະຫັດພາສີ | ລາຍການສິນຄ້າ | ເຫດຜົນການຄຸ້ມຄອງ | ນິຕິກຳອ້າງອີງ | ຂະແໜງການຄຸ້ມຄອງ |
|---|---|---|---|---|---|
| | | | | ເລກທີ 05/ນຍ, ລົງວັນທີ 08 ພຶດສະພາ 2018;<br>– ຂໍ້ຕົກລົງວ່າດ້ວຍການສ້າງ ແລະ ຄຸ້ມຄອງສວນສັດ, ຟາມສັດປ່າ, ສູນຟື້ນຟູ ແລະ ຂະຫຍາຍພັນ ສັດປ່າ ແລະ ສວນພຶກປ່າ ເລກທີ 0188/ກປ, ລົງວັນທີ 3 ກຸມພາ 2019;<br>– ຂໍ້ຕົກລົງວ່າດ້ວຍການກຳນົດ ບັນຊີໄມ້ I, II ແລະ III ເລກທີ 0448/ກປ, ລົງວັນທີ 6 ເມສາ 2021;<br>– ຂໍ້ຕົກລົງວ່າດ້ວຍການກຳນົດ ບັນຊີເຄື່ອງປ່າຂອງດົງ I, II ແລະ III ເລກທີ 0279/ກປ, ລົງວັນທີ 19 ກຸມພາ 2020. | |
| 07 | 2612 | ແຮ່ທາດກຳມັນຕະພາບລັງສີທຸກຊະນິດ | ເພື່ອປົກປັກຮັກສາຄວາມສະຫງົບ ແລະ ຄວາມໝັ້ນຄົງຂອງຊາດ | – ກົດໝາຍວ່າດ້ວຍແຮ່ທາດ ສະບັບປັບປຸງ ເລກທີ 31/ສພຊ, ລົງວັນທີ 31 ທັນວາ 2017;<br>– ດຳລັດວ່າດ້ວຍການສົ່ງອອກຜະລິດຕະພັນແຮ່ທາດ ເລກທີ 90/ນຍ, ລົງວັນທີ 09 ມິຖຸນາ 2008;<br>– ຂໍ້ຕົກລົງວ່າດ້ວຍລະບຽບການຂໍອະນຸຍາດນຳເຂົ້າ ແລະ ສົ່ງອອກແຮ່ທາດ ແລະ ຜະລິດຕະພັນແຮ່ທາດເລກທີ 0352/ພບ, ລົງວັນທີ 13 ມີນາ 2012;<br>– ຂໍ້ຕົກລົງວ່າດ້ວຍການຊື້-ຂາຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ເລກທີ 0484/ພບ, ລົງວັນທີ 20 ເມສາ 2012. | ກົມຄຸ້ມຄອງບໍ່ແຮ່ (ກະຊວງພະລັງງານ ແລະ ບໍ່ແຮ່) |

**ໝາຍເຫດ:** ສຳລັບສິນຄ້າທີ່ກຳນົດໃນຕາຕະລາງລາຍການສິນຄ້າເກືອດຫ້າມການນຳເຂົ້າ ແລະ ຕາຕະລາງລາຍການສິນຄ້າເກືອດຫ້າມການສົ່ງອອກ ໃນມາດຕາ 3 ຂອງຂໍ້ຕົກລົງສະບັບນີ້ ທີ່ບໍ່ໄດ້ກຳນົດລະຫັດພາສີ ຫຼື ກຳນົດແລ້ວແຕ່ບໍ່ຈະແຈ້ງ ຫຼື ບໍ່ຄົບຖ້ວນ ແມ່ນຂະແໜງການກ່ຽວຂ້ອງ ຈະສົມທົບກັບລັດຖະການພາສີ ໃນການຈັດເລກລະຫັດພາສີຂອງສິນຄ້າຕົວຈິງ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບເນື້ອໃນລາຍລະອຽດຂອງສິນຄ້າ ຕາມທີ່ໄດ້ກຳນົດໃນສາລະບານອັດຕາພາສີ ຂອງ ສປປ ລາວ. ~

**ມາດຕາ 4 ການນຳເຂົ້າ ຫຼື ສົ່ງອອກ ສິນຄ້າທີ່ນອນໃນຕາຕະລາງລາຍການສິນຄ້າເກືອດຫ້າມການນຳເຂົ້າ ແລະ ສົ່ງອອກ**

ສິນຄ້າທີ່ນອນໃນຕາຕະລາງລາຍການສິນຄ້າເກືອດຫ້າມການນຳເຂົ້າ ຫຼື ຕາຕະລາງລາຍການສິນຄ້າເກືອດຫ້າມການສົ່ງອອກ ທີ່ໄດ້ກຳນົດໃນມາດຕາ 3 ຂອງຂໍ້ຕົກລົງສະບັບນີ້ ແມ່ນບໍ່ສາມາດນຳເຂົ້າ ຫຼື ສົ່ງອອກ ເພື່ອຈຸດປະສົງທາງດ້ານການຄ້າ, ຍົກເວັ້ນການນຳເຂົ້າ ຫຼື ສົ່ງອອກ ເພື່ອຈຸດປະສົງໃນການຄົ້ນຄວ້າ, ການພັດທະນາເຕັກໂນໂລຊີ, ການປ້ອງກັນ, ການສະກັດກັ້ນ ແລະ ການລະງັບອັນຕະລາຍທີ່ອາດເກີດຂຶ້ນຕໍ່ສຸຂະພາບ, ຊີວິດ, ຊັບສິນ, ສິ່ງແວດລ້ອມ ແລະ ການນຳໃຊ້ໃນວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ຕ້ອງໄດ້ຮັບອະນຸຍາດຈາກລັດຖະບານ.

**ມາດຕາ 5 ການນຳເຂົ້າ ຫຼື ສົ່ງອອກ ສິນຄ້າທີ່ບໍ່ນອນໃນຕາຕະລາງລາຍການສິນຄ້າເກືອດຫ້າມການນຳເຂົ້າ ແລະ ສົ່ງອອກ**

ສິນຄ້າທີ່ບໍ່ນອນໃນຕາຕະລາງລາຍການສິນຄ້າເກືອດຫ້າມການນຳເຂົ້າ ຫຼື ຕາຕະລາງລາຍການສິນຄ້າເກືອດຫ້າມການສົ່ງອອກ ທີ່ໄດ້ກຳນົດໃນມາດຕາ 3 ຂອງຂໍ້ຕົກລົງສະບັບນີ້ ແມ່ນສາມາດນຳເຂົ້າ ເພື່ອຈຸດປະສົງທາງການຄ້າ ແຕ່ຕ້ອງດຳເນີນຂັ້ນຕອນການນຳເຂົ້າ ຫຼື ສົ່ງອອກ ຕາມລະບຽບການສະເພາະຂອງ ແຕ່ລະປະເພດສິນຄ້າ.

**ມາດຕາ 6 ການປັບປຸງຕາຕະລາງລາຍການສິນຄ້າເກືອດຫ້າມການນຳເຂົ້າ ແລະ ສົ່ງອອກ**

ການປັບປຸງຕາຕະລາງລາຍການສິນຄ້າເກືອດຫ້າມການນຳເຂົ້າ ແລະ ສົ່ງອອກ ແມ່ນການເພີ່ມ ຫຼື ຫຼຸດລາຍການສິນຄ້າທີ່ກຳນົດໃນມາດຕາ 3 ຂອງຂໍ້ຕົກລົງສະບັບນີ້.

ການປັບປຸງແຕ່ລະຄັ້ງ ຕ້ອງໄດ້ຮັບການອະນຸມັດຈາກ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ຕາມການຄົ້ນຄ້ວາ ແລະ ສະເໜີຂອງພາກສ່ວນທີ່ກ່ຽວຂ້ອງ.

ພາຍຫຼັງທີ່ໄດ້ປັບປຸງຕາຕະລາງລາຍການສິນຄ້າສຳເລັດແລ້ວ ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງໄດ້ແຈ້ງໃຫ້ພາກສ່ວນທີ່ກ່ຽວຂ້ອງ ຊາບ ແລະ ຈັດຕັ້ງປະຕິບັດ.

**ມາດຕາ 7 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບປະສິດທິຜົນສູງ.

**ມາດຕາ 8 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ ເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນ ແຈ້ງການ ກ່ຽວກັບສິນຄ້າເກືອດຫ້າມການນຳເຂົ້າ ຫຼື ສົ່ງອອກ ເລກທີ 0973/ອຄ.ກຂອ, ລົງວັນທີ 25 ມີນາ 2011.

**ລັດຖະມົນຕີ**

ປອ.ຄຳແພງ ໄຊສົມແພງ